P.D.D.P 2 ໂຄງການພັດທະນາ ຊົນນະບົດ ເມືອງຜົ້ງສາລີ

ຄ.ພ.ມ.ຜ 2 PROJET DE DEVELOPPEMENT RURAL DU DISTRICT DE PHONGSALY



# ຄູ່ມື

# ການປູກໝາກນັດ

# ແລະ

# ຄວບຄູມການອອກໝາກ

ໂດຍ : ຂະແໜງສົ່ງເສີມການປູກພືດເປັນສິນຄ້າ ແລະ ການຕະຫລາດ

ກໍລະກົດ 2006

## ພາກສະເຫນີ

ໝາກນັດເປັນພືດທີ່ຈະເລີນເຕີບໂຕໄດ້ດີໃນເຂດຮ້ອນ (ແທບອາຟລິກກາ, ອາເມລິກາລາຕິນ ແລະ ອາຊີ). 60% ຂອງຜົນຜະລິດໃນທົ່ວໂລກແມ່ນມາຈາກແທບອາຊີ (ປະເທດຈີນ : 1 500 000 ໂຕນ).

ໝາກນັດສາມາດບໍລິໂພກສົດ ແລະ ຍັງສາມາດນຳມາແປຮູບເປັນກວນຫມາກນັດ, ນຳເຂົ້າໂຮງງານເພື່ອແປຮູບເປັນຫມາກນັດກະປ໋ອງ ຫລື ເປັນນ້ຳຫມາກໄມ້. ແລະ ນຳເຂົ້າໂຮງງານອຸດສາຫະກຳເພື່ອແປຮູບ ເປັນໝາກນັດກະປ໋ອງໄດ້. ນອກຈາກນັ້ນ, ພວກເຮົາຍັງສາມາດນຳເອົາຫມາກນັດມາຜະລິດເປັນເຫລົ້າດື່ມໆ, ຜະລິດເຈ້ຍ ແລະ ຍັງສາມາດນຳເອົາໃບຫມາກນັດມາເຮັດເປັນອາຫານສັດລ້ຽງໄດ້.

ຫມາກນັດປະກອບມີທາດນ້ຳຕານສູງ. ດັ່ງນັ້ນ, ຫມາກນັດຈຶ່ງຖືໄດ້ວ່າເປັນຫມາກໄມ້ບຳລຸງຮ່າງກາຍເພື່ອເສີມສ້າງຄວາມແຂງແຮງ. ຫມາກນັດບັນຈຸທາດວິຕາມິນສູງ ແລະ ເປັນຫມາກໄມ້ທີ່ຊ່ວຍຍ່ອຍລະບົບກະເພາະອາຫານ.

ການຜະລິດຫມາກນັດຢູ່ ສປປ ລາວ ສ່ວນຫຼາຍແມ່ນເພື່ອນຳມາບໍລິໂພກສົດ ແລະ ຈຳໜ່າຍຫມາກນັດສົດຕາມທ້ອງຕະຫຼາດ. ການແປຮູບໝາກນັດເພື່ອຈຳໜ່າຍຕາມທ້ອງຕະຫລາດແມ່ນຍັງມີໜ້ອຍ. ໃນບາງເຂດ, ໂດຍສະເພາະຫມູ່ບ້ານທີ່ຢູ່ຫ່າງໄກຊອກຫລີກ, ການນຳຫມາກນັດມາຂາຍຕາມທ້ອງຕະຫລາດໃຫ່ຍໆແມ່ນຍັງມີຄວາມຍຸ້ງຍາກ ທັ້ງນີ້ກໍ່ເນື່ອງມາຈາກບັນຫາຍຸ້ງຍາກໃນການຂົນສົ່ງ ແລະ ຈຳນ່າຍຫມາກນັດໄດ້ພຽງແຕ່ໃນເຂດຕະຫລາດທ້ອງຖິ່ນ.

## ການປູກຕົ້ນຫມາກນັດ

### ສະພາບແວດລ້ອມວິທະຍາ

ອຸນຫະພູມເຫມາະສົມສະເລ່ຍໃນການຜະລິດຫມາກນັດແມ່ນ 25 ອົງສາ. ຖ້າອຸ່ນຫະພູມຕ່ຳຫລາຍ, ການເຕີບໂຕຂອງຕົ້ນຫມາກນັດຈະຊ້າ, ເນື້ອຫມາກນັດຈະອອກເປັນສີນ້ຳຕານ ແລະ ມີລົດຊາດຂົມ. ຢູ່ຜົ້ງສາລີ, ປະລິມານຜົນຕົກແມ່ນມີຢ່າງພຽງພໍ ເພື່ອຕອບສະໜອງຄວາມຕ້ອງການນ້ຳຂອງໝາກນັດ (1 200 ຫາ 1 500 ມມ/ປີ). ກໍລະນີມີຄວາມແຫ້ງແລ້ງ, ຕົ້ນຫມາກນັດກໍ່ສາມາດປັບຕົວເຂົ້າກັບໄດ້ສະພາບໄດ້ ແຕ່ມີການເຕີບໂຕຊ້າແດ່. ກໍລະນີຂາດນ້ຳ, ພວກເຮົາສາມາດເອົາເຟືອງມາປົກຄຸມບໍລິເວນຕໍຫມາກນັດເພື່ອຮັກສາຄວາມຊຸ່ມຊື້ນ ແລະ ຫລີກລ້ຽງການລະເຫີຍອາຍ.

## ການກະກຽມພື້ນທີ່ປູກ

ຕົ້ນໝາກນັດສາມາດຈະເລີນເຕີບໂຕໄດ້ດີໃນດິນເບົາ, ລະບາຍນ້ຳໄດ້ດີ ແລະ ດິນກົດ. ດິນທີ່ເຫມາະສົມທີ່ສຸດໃນການປູກຕົ້ນຫມາກນັດແມ່ນດິນແກມຊາຍ (pH ຢູ່ລະຫວ່າງ 4.5 - 5.5). ນອກນັ້ນ, ຕົ້ນຫມາກນັດກໍ່ຍັງມັກດິນທີ່ມີຄວາມອຸດົມສົມບູນສູງ. ຖ້າດິນບໍ່ມີຄວາມອຸດົມສົມບູນສູງ, ເຮົາສາມາດປັບປຸງດິນຄືນດ້ວຍການໃຫ້ຝຸ່ນອາສິດ ຫລື ຝຸ່ນວິທະຍາສາດ.



ກ່ອນຈະມີການປູກຕົ້ນຫມາກນັດ, ມັນຈະເປັນການດີຫລາຍຖ້າໄຖພວນດິນ ແລະ ປະຕາກແດດ ເພື່ອຂ້າເຊື້ອພະຍາດ. ນອກຈາກນັ້ນ, ຈະເປັນການດີທີ່ສຸດຖ້າປູກພືດຊະຫນິດອື່ນໆໃສ່ໃນພື້ນທີ່ດິນທີ່

ກຽມໃວ້ນັ້ນໃນໄລຍະໃດນື່ງ ກ່ອນຈະມີການປູກຕົ້ນຫມາກນັດໃສ່ໃນຮອບໃຫມ່ຕໍ່ໄປ.



ຖ້າເປັນດິນທີ່ມີຄວາມຄ້ອຍຊັນສູງ, ຄວນປູກຕົ້ນຫມາກນັດເປັນຫນານ (ໄລຍະຫ່າງລະຫວ່າງຫນານແມ່ນ 1,5 ແມັດ) ແລະ ຕ້ອງກະກຽມຂູມໃຫ້ແທດເຫມາະກັບຕົ້ນເບ້ຍຫມາກນັດທີ່ຈະປູກ.

ຄວາມຄ້ອຍຊັນຂອງພື້ນທີ່ຢູ່ໃນລະດັບ 1 ຫາ 2% ແມ່ນເຫມາະສົມສຳລັບປູກຕົ້ນຫມາກນັກ. ໃນເຂດພື້ນທີ່ໆມີຄ້ອຍຊັນສູງ ເຖິງ 10% ກໍ່ສາມາດປູກໄດ້ ແຕ່ຕ້ອງກະກຽມພື້ນທີ່ໃຫ້ດີ ແລະ ປູກປະປົນກັບພືດຊະຫນິດອື່ນໆ ເພື່ອຫລີກລ້ຽງການໄຫລເຊາະດິນຂອງນ້ຳຝົນ.



## ການເພາະປູກຕົ້ນຫມາກນັດ

ຕົ້ນຫມາກນັດເປັນພືດທີ່ມີອາຍຸນັບແຕ່ເວລາປູກເຖິງການເກັບກ່ຽວດົນປະມານ 15-18 ເດືອນ. ຫຼັງຈາກເກັບກ່ຽວປີທຳອິດ, ຕົ້ນຫມາກນັດສາມາດປົ່ງຫນໍ່ແຫນງອອກ ແລະ ພວກເຮົາສາມາດເກັບກ່ຽວຜົນຜະລິດໄດ້ຕື່ມອີກໃນປີທີ່ສອງ ແລະ ປີທີ່ສາມ. ຕົ້ນຫມາກນັດມີຮອບວຽນການປູກໃນລະຫວ່າງ ແຕ່ 4 ຫາ 5 ປີ. ຕົ້ນຫມາກນັດມັກເກີດໄດດີໃນເຂດທີ່ມີແສງແດດ ( ບໍ່ຄວນປູກຕົ້ນຫມາກນັດໃນເຂດພື້ນທີ່ໆມີຮົ່ມບັງ).



ການຕັດແຕ່ງຕົ້ນຫມາກນັດໃຫ້ຢູ່ໃນລະດັບຕ່ຳພາຍຫລັງການເກັບກ່ຽວ ແມ່ນຄວນປະຕິບັດເຮັດ ເພື່ອໃຫ້ແຫນງອ່ອນຈໍ່ແຫນງອອກໃຫມ່ໃນຂອບເຂດຕ່ຳສຸດຂອງລຳຕົ້ນຫມາກນັດ ທັ້ງນີ້ກໍ່ເພື່ອຫລີກລ້ຽງການໂຄ້ນລົ້ມຂອງຕົ້ນຫມາກນັດໃນເວລາຫມາກນັດເປັນຫມາກໃຫ່ຍເຕັມທີ. ຫນໍ່ແຫນງເຫມາະສົມທີ່ຈະຈິ່ງໄວ້ ຄວນເລືອກປະໄວ້ແຫນງທີ່ຢູ່ຕ່ຳສຸດ.



ການຫຸ້ມຫົ່ຫມາກນັດດ້ວຍໃບຫມາກນັດ ກໍ່ແມ່ນວິທີການນື່ງເຮັດໃຫ້ຫມາກນັດໃຫ່ຍ ຫລືຕຶງດີ (ແຕ່ 7 ຫາ 10 ໃບ).

ຄວາມຫນາແຫນ້ນໃນການປູກຕົ້ນຫມາກນັດແມ່ນໃຫ້ຢູ່ໃນລະດັບ 1 ຫາ 7 ຕົ້ນ/ນື່ງແມັດກາເລ ແລ້ວແຕ່ຜູ້ປູກຕ້ອງການ ແລະ ຈະປູກຕົ້ນຫມາກນັດພຽງຢ່າງດຽວ ຫລື ຈະປູກພືດອື່ນໆປະສົມກໍ່ສາມາດເຮັດໄດ້.

ຖ້າເປັນດິນທີ່ມີຄວາມຄ້ອຍຊັນສູງ, ຄວນປູກຕົ້ນຫມາກນັດເປັນຫນານ (ໄລຍະຫ່າງລະຫວ່າງຫນານແມ່ນ 1,5 ແມັດ) ແລະ ຕ້ອງກະກຽມຂູມໃຫ້ແທດເຫມາະກັບຕົ້ນເບ້ຍຫມາກນັດທີ່ຈະປູກ.



ລະດູປູກຕົ້ນຫມາກນັດທີ່ເຫມາະສົມ ແມ່ນເລີ້ມແຕ່ເດືອນ ມີນາ ຫາ ເດືອນມິຖຸນາ ຫລື ຕົ້ນລະດູຝົນ. ສິ້ນສ່ວນທີ່ນຳມາປູກແມ່ນຫນໍ່ແຫນງ ຫລື ຈຸກຫມາກນັດ. ຄວນແກະເອົາໃບຫມາກນັດຕາມໃກ້ໆຕີນແຫນງ ຫລື ຈຸກອອກ ກ່ອນຈະນຳໄປປູກ.

ແຫນງ ຫລື ຈຸກທີ່ເຫມາະສົມໃນການປູກແມ່ນໃຫ້ມີຄວາມຍາວແຕ່ 25-30 ຊມ. ນຳເອົາຈຸກ ຫລື ແຫນງຫມາກນັດລົງຂູມທີ່ກຽມໄວ້ແລ້ວນັ້ນ, ຖົມດິນ ແລະ ຢັດດິນໃຫ້ແຫນ້ນ ເພື່ອບໍ່ໃຫ້ແຫນງ

ຫລື ຈຸກໝາກນັດລົ້ມ, ແຕ່ບໍ່ຄວນຢັດແໜ້ນຈົນເກີນໄປ ເພາະຈະເຮັດໃຫ້ ແໜງ ຫລື ຈຸກໝາກນັດ ບວບຊໍ້າ ແລະ ເຕີບໂຕຊ້າ.

## <u>ການໃສ່ຝຸ່ນ</u>

- ໃຫ້ໃສ່ຝຸ່ນໃນ 2 ໄລຍະຄື :
  - ① ໃນໄລຍະການເຕີບໂຕຂອງຕົ້ນໝາກນັດ ໂດຍສັງເກດການເລີ້ມປົ່ງໃບອ່ອນສີຂາວ ພາຍຫລັງປູກໄດ້ໃນໄລຍະໃດນຶ່ງ, ໃສ່ຝຸ່ນວິທະຍາສາດສູດ 46 - 00 – 00, ໃສ່ໃນອັດຕາ 1 ບວງແກງສວດ/1 ຕົ້ນ ຫລື 50 ກິໂລ/2 000 ຕົ້ນ. ໃສ່ບໍລິເວນຮ່ອງອ້ອມເຫງົ້າໝາກນັດທີ່ໄດ້ກະກຽມໄວ້ *(ຂຸດອ້ອມເຫງົ້າ ແລ້ວເອົາຝຸ່ນໃສ່ອ້ອມເຫງົ້າໃຫ້ທົ່ວ ຫຼັງຈາກນັ້ນກໍ່ເອົາດິນຖົມຄືນ).*




  - ② ໄລຍະໄກ້ຈະອອກໝາກ ໂດຍສັງເກດຈາກຕົ້ນໝາກນັດ ມີປະມານ 30 ໃບ ໂດຍນຳໃຊ້ຝຸ່ນສູດ 15-15-15, ໃສ່ໃນອັດຕາ 1 ບ່ວງແກງສວດ/1 ຕົ້ນ ຫຼື 50 ກິໂລ/2000 ຕົ້ນ, ໃສ່ບໍລິເວນຮ່ອງອ້ອມເຫງົ້າໝາກນັດທີ່ໄດ້ກະກຽມໄວ້ *(ຂຸດອ້ອມເຫງົ້າ ແລ້ວເອົາຝຸ່ນໃສ່ອ້ອມເຫງົ້າໃຫ້ທົ່ວ ຫຼັງຈາກນັ້ນກໍ່ເອົາດິນຖົມຄືນ).*

## <u>ດ້ານການຄ້າ</u>

ຢູ່ເມືອງຜົ້ງສາລີ, ໝາກນັດເລີ້ມຂາຍກັນຢູ່ໃນລະຫວ່າງເດືອນມິຖຸນາ ຫາເດືອນສິງຫາ. ໃນຊ່ວງໄລຍະນີ້, ໝາກນັດຈະອັງຕະຫລາດ ແລະ ຂາຍໃນລາຄາຖືກ ໜ່ວຍລະ 500 ກີບ, ເບື້ອງໜຶ່ງກໍ່ເພາະເປັນລະດູການໆອອກໝາກຂອງໝາກໄມ້ໃຫ້ໝາກຫລາຍໆຊະນິດນຳອອກມາຂາຍພ້ອມໆກັນ.

ການນຳໃຊ້ສານຮໍໂມນຄວບຄຸມການອອກໝາກ ສາມາດໃຫ້ເຮົາເກັບກ່ຽວໝາກນັດກ່ອນລະດູປົກກະຕິ ຄືເລີ້ມແຕ່ເດືອນມີນາເປັນຕົ້ນໄປ. ການຄວບຄຸມໝາກນັດໃຫ້ອອກຕາມແຕ່ໄລຍະແມ່ນເຮັດໃຫ້ສາມາດຂາຍໝາກນັດໃນລາຄາດີ ຄື 2 000 ຫາ 3 000 ກີບຕໍ່ໜ່ວຍ.

## ການນຳໃຊ້ຮໍໂມນ *(ສານຄວບຄຸມການອອກໝາກນັດ)*




ສານຮໍໂມນມີຫລາຍຊະນິດ, ອະທິເຊັ່ນ :

❶ ຊື່ສາມັນ : ອີທີຟອນ , ໃນກະປ໋ອງບຸຈຸນ້ຳຢາ 1 ລິດ
ຊື່ການຄ້າ : ເຣດ-ຟອນ *(RED-FON)*
ສັບພະຄຸນ :ໃຊ້ຄວບຄຸມການອອກໝາກ *(ໝາກນັດ)*
ລາຄາຊື້ : 500 ບາດໄທ *(ລາຄາປີ 2006)*
ແຫຼ່ງຜະລິດ : ປະເທດໄທ ແລະ ປະເທດຈີນ

## ປະລິມານນຳໃຊ້

ນຳເອົານ້ຳຮໍໂມນ 15 ເຊເຊ *(ໜຶ່ງບວງແກງ)* ປະສົມນ້ຳ 20 ລິດ ແລະ ຝຸ່ນວິທະຍາສາດສູດ *(46-00-00)* 300 ກລາມ ປະສົມໃຫ້ເຂົ້າກັນດີ. ນຳເອົາຢາສ່ວນປະສົມແລ້ວ ຢອດໃສ່ກາງຍອດຕົ້ນໝາກນັດທີ່ມີອາຍຸໄດ້ 9-12 ເດືອນ *(ຕົ້ນໝາກນັດມີນ້ຳໜັກສົດ 2,5-3 ກິໂລກຣາມ)*, ໃນອັດຕາ 60 ຫາ 80 ເຊເຊຕໍ່ຕົ້ນ. ຫລືໃຊ້ມາດຕະຖານອື່ນໃນການຢອດຮໍໂມນເຊັ່ນວ່າ ນຳ ເອົານ້ຳຢາປະສົມແລ້ວບັນຈຸໃສ່ 2 ຈອກແກ້ວນ້ອຍ ຫລື ນຶ່ງຈອກແກ້ວທຳມະດາກັບອີກເຄິ່ງຈອກ ຫລື ປະມານ 4 ຫາ 5 ບວງແກງກໍ່ໄດ້, ແລ້ວນຳໄປຢອດໃສ່ກາງຍອດຂອງຕົ້ນໝາກນັດ. ປະສິດທິພາບຫຼັງໃຊ້ຮໍໂມນຫຼາຍກ່ວາ 90% ອອກໝາກ.










## ຂໍ້ຄວນລະວັງ

ບໍ່ຄວນປະຕິບັດການຢອດຮໍໂມນໃນເວລາແດດກ້າ ເພາະມັນຈະເປັນການເຜົາໄໝ້ໃບອ່ອນຕົ້ນໝາກນັດ. ຖ້າຈຳເປັນຕ້ອງໃຊ້ຊ້ຳຄືນອີກ, ການໃຊ້ຄັ້ງທີ່ 2 ຄວນໃຊ້ຫ່າງຈາກຄັ້ງທຳອິດຢ່າງໜ້ອຍ 7 ວັນ *(ກໍລະນີທີ່ວ່າ ຫຼັງຈາກຢອດໄດ້ 1-2 ຊົ່ວໂມງ ເກີດມີຝົນຕົກຮໍ່າ ຊຶ່ງຈຳເປັນຕ້ອງໄດ້ຢອດຊ້ຳຄືນອີກເທື່ອໜຶ່ງ)* . ຫຼັງຈາກປະສົມຮໍໂມນແລ້ວ ຄວນໃຊ້ໃຫ້ໝົດພາຍໃນ 24 ຊົ່ວໂມງ.

## ການເກັບກ່ຽວ

ຕາມທຳມະດາແລ້ວ ຫລັງຈາກຍອກຮໍໂມນໄດ້ໃນໄລຍະ 30 ຫາ 45 ວັນ ຫມາກນັດຈະເລີ້ມຈໍ່ຫມາກ. ຖ້ານັບແຕ່ມື້ລົງມືປະຕິບັດຢອດຮໍໂມນຈົນເຖິງມື້ເກັບກ່ຽວອອກຂາຍແມ່ນມີປະມານ 140 ຫາ 180 ວັນ.

❷ ຊື່ສາມັນ : ອີທີຟອນ

ຊື່ການຄ້າ: ອີເທຣລ 3% ພີຈີອາ (ETHREL^R 3% PGR)




## ປະລິມານນຳໃຊ້

ນຳເອົາສານອີທີຟອນ 200-667 ຊີຊີ ປະສົມນ້ຳ 20 ລິດ ແລະ ຝຸ່ນວິທະຍາສາດສູດ *(46-00-00)* 300 ກລາມ ກ່ອຍໃຫ້ເຂົ້າກັນດີ. ນຳເອົານ້ຳຢາປະສົມແລ້ວ ໄປຢອດໃສ່ໃຈກາງຍອດຕົ້ນຫມາກນັດທີ່ມີອາຍຸໄດ້ 9-12 ເດືອນ *(ຕົ້ນຫມາກນັດມີນ້ຳຫນັກສົດ 2,5-3 ກິໂລກຣາມ)* ໃນອັດຕາ 60-80 ຊີ ຊີຕໍ່ຕົ້ນ. ຫລືນຳເອົາສານອີທີຟອນ 1 ລິດ + ນ້ຳ 200 ລິດ + ຝຸ່ນ 3 ກລ *(46-00-00)* ປະສົມໃຫ້ເຂົ້າກັນດີ. ນຳເອົານ້ຳຢາປະສົມ ແລ້ວນັ້ນ ໄປຢອດໃສ່ໃຈກາງຍອດຕົ້ນ ຫມາກນັດ ໃນອັດຕາສ່ວນດີກັນກັບສະແດງໃນຂ້າງເທິງ, ຕ້ອງຢອດໃນ ເວລາອາກາດເຢັນ.







ຫລືໃຊ້ມາດຕະຖານອື່ນໃນການຢອດຮໍໂມນເຊັ່ນວ່າ ນຳເອົານ້ຳ ຢາປະສົມແລ້ວບັນຈຸໃສ່ 2 ຈອກແກ້ວນ້ອຍ ຫລື ນື່ງຈອກແກ້ວທຳມະ ດາກັບອີກເຄິ່ງຈອກ ຫລື ປະມານ 4 ຫາ 5 ບວງແກງກໍ່ໄດ້, ແລ້ວນຳໄປ ຢອດໃສ່ກາງຍອດຂອງຕົ້ນຫມາກນັດ. ປະສິດທິພາບຫຼັງໃຊ້ຮໍໂມນຫຼາຍ ກ່ວາ 90% ອອກຫມາກ.




## *ຂໍ້ຄວນລະວັງ*

ບໍ່ຄວນປະຕິບັດການຢອດຮໍໂມນໃນເວລາແດດກ້າ ເພາະມັນຈະເປັນການເຜົາໄຫມ້ໃບອ່ອນຕົ້ນຫມາກນັດ. ຖ້າຈຳເປັນຕ້ອງໃຊ້ຊ້ຳຄືນອີກ, ການໃຊ້ຄັ້ງທີ່ 2 ຄວນໃຊ້ຫ່າງຈາກຄັ້ງທຳອິດຢ່າງຫນ້ອຍ 7 ວັນ *(ກໍລະນີທີ່ວ່າ ຫຼັງຈາກຢອດໄດ້ 1-2 ຊົ່ວໂມງ ເກີດມີຝົນຕົກຮຳ ຊຶ່ງຈຳເປັນຕ້ອງໄດ້ຢອດຊ້ຳຄືນອີກເທື່ອໜຶ່ງ)* . ຫຼັງຈາກປະສົມຮໍໂມນແລ້ວ ຄວນໃຊ້ໃຫ້ຫມົດພາຍໃນ 24 ຊົ່ວໂມງ.

# ແຜນວາດການຢອດຮໍໂມນ ເພື່ອຄວບຄຸມການອອກໝາກຂອງໝາກນັດ




**ລາຄາຜົນຜະລິດ ແລະ ກຳໄລເພີ້ມ/ໝາກ (ເງິນກີບ, ປີ 2006)**

| ກອງ | ລາຄາຂາຍ | ຈຳນວນຕົ້ນຢອດຮໍໂມນ | ລາຍຈ່າຍ/ຕົ້ນ | ກຳໄລສຸດທິ/ໝາກ | ຄວາມແຕ່ກຕາງ/ລະດູປົກກະຕິ |
|---|---|---|---|---|---|
| 10 ເຊເຊ | 2 500 | 12 | 208 | 2 292 | 1 792 |
| 20 ເຊເຊ | 3 000 | 24 | 125 | 2 375 | 1 875 |
| 50 ເຊເຊ | 5 000 | 60 | 83 | 2 417 | 1 917 |
| **ສະເລ່ຍ** | **3 500** | **32** | **139** | **2 361** | **1 861** |